ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລໍ້ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດການເຂົ້າຮ່ວມກອງປະຊຸມໂຕະມົນໃຫຍ່ຄັ້ງທີ 13




ໃນລະຫວ່າງວັນທີ 17 ພະຈິກ 2021 ຜ່ານມານີ້, ຕ່າງໜ້າທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະໄດ້ສຳເລັດເຂົ້າຮ່ວມກອງປະຊຸມໂຕະມົນໃຫຍ່ ຄັ້ງທີ 13 ຜ່ານລະບົບອອນລາຍ ໂດຍການເປັນປະທານຂອງ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ໂດຍກອງປະຊຸມດັ່ງກ່າວໃຫ້ກຽດກ່າວເປີດໂດຍຂອງພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ກ່າວມີຄຳເຫັນໂດຍທ່ານ ອາຄິມ ສະຕາຍເນີ ຜູ້ອຳນວຍການໃຫຍ່ອົງການສະຫະປະຊາຊາດ. ພ້ອມນັ້ນ, ຍັງມີ ທ່ານ ນາງ ຊາຣາ ເຊເກັນເນສ ຜູ້ປະສານງານ ອົງການ ສປຊ ປະຈຳ ສປປ ລາວ ແລະ ການນຳຂັ້ນສູງຈາກກະຊວງ-ຂະແໜງການເອກອັກຄະລັດຖະທູດຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ສະມາຄົມບໍ່ຫວັງຜົນກຳໄລ, ພາກເອກະຊົນທັງພາຍໃນ ແລະຕ່າງປະເທດ ເຂົ້າຮ່ວມ.

ກອງປະຊຸມແມ່ນໄດ້ປຶກສາຫາລືແລກປ່ຽນທັດສະນະກ່ຽວກັບຜົນສຳເລັດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ການທົບທວນແຫ່ງຊາດແບບ

ສະໜັກໃຈຄັ້ງທີ 2 ກ່ຽວກັບການຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ. ພ້ອມນີ້ ກອງປະຊຸມຍັງຈະໄດ້ສົນທະນາ ໃນ 3 ບັນຫາຄື: ກົນໄກໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX; ການສ້າງແຜນຟື້ນຟູຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19; ຍຸດທະສາດຂ້າມຜ່ານເພື່ອການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ວຽກງານການຮ່ວມມືເພື່ອການພັດທະນາ. ໃນນີ້, ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ໄດ້ມີຄຳເຫັນຕໍ່ກອງປະຊຸມຕິດພັນກັບວຽກງານການປະກອບສ່ວນຂອງ ທຫລ ໃນການຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆ ເພື່ອແກ້ໄຂຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ການຄຸ້ມຄອງມະຫາພາກທາງດ້ານການເງິນໃຫ້ມີຄວາມໝັ້ນທ່ຽງ ແນໃສ່ການປະກອບສ່ວນໃນວຽກງານຂອງຊາດຢ່າງຕັ້ງໜ້າໂດຍສະເພາະແມ່ນວາລະແຫ່ງຊາດເພື່ອນຳພາປະເທດອອກຈາກສະຖານະພາບດ້ອຍພັດທະນາ ໃນປີ 2026 ຕາມແຜນການທີ່ວາງໄວ້.

ໃນຕອນທ້າຍກອງປະຊຸມ, ທ່ານປະທານ ພ້ອມດ້ວຍປະທ່ານຮ່ວມ ໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງກອງປະຊຸມທີ່ເຕັມໄປດ້ວຍເນື້ອໃນສຳ ຄັນ ແລະ ການແລກປ່ຽນຄຳຄິດເຫັນທີ່ອຸດົມສົມບູນ, ເຫັນໄດ້ບັນຫາ ແລະ ສິ່ງທ້າທາຍໃນການພັດທະນາ ລວມເຖິງການສືບຕໍ່ຮ່ວມມືກັບຄູ່ຮ່ວມພັດທະນາ. ພ້ອມດຽວກັນນີ້, ທ່ານປະທານກໍ່ໄດ້ເນັ້ນໜັກ ແລະ ຮຽກຮ້ອງໃຫ້ທຸກພາກ ສ່ວນໂດຍສະເພາະບັນດາກະຊວງ-ຂະແໜງການຈົ່ງເອົາໃຈໃສ່ໃນການຜັນຂະຫຍາຍໝາກຜົນຂອງກອງປະຊຸມໃນຄັ້ງນີ້ໃຫ້ກ້າວເຂົ້າສູ່ລວງເລິກ ແລະ ສ້າງເປັນແຜນງານເພື່ອປະກອບສ່ວນເຂົ້າໃນວາລະແຫ່ງຊາດ ເພື່ອການພັດທະນາແບບຍືນຍົງ ແລະ ບັນລຸເປົ້າໝາຍສູງສຸດໃນການນຳພາປະເທດຊາດອອກຈາກສະຖານະພາບດ້ອຍພັດທະນາເທື່ອລະກ້າວ.

*ຂ່າວ-ພາບ: ພະແນກຮ່ວມມືອົງການການເງິນສາກົນ, ກົມຮ່ວມມືສາກົນ*

*ຢູ່ເມືອງລາວ ໃຊ້ເງິນກີບລາວ*